ຂ່າວ: ກອງປະຊຸມແລກປ່ຽນບົດຮຽນກ່ຽວກັບການອານຸລັກສັດປ່າຕາມແນວຊາຍແດນລາວ - ຈີນ
Written by ນ. ກໍ່າແກ້ວ ຫຼ້າດວງສີ
Tuesday, 04 November 2014 09:21 - Last Updated Tuesday, 04 November 2014 09:27

ໃນຕອນເຊົ້າ ຂອງວັນທີ 23 ຕຸລາ 2014 ຜ່ານມານີ້
ໄດ້ເປີດກອງປະຊຸມແລກປ່ຽນບົກຮຽນກ່ຽວກັບການອະນຸລັກສັດປ່າຕາມແນວຊາຍແດນລະຫວ່າງ ລາວ -
ຈີນຂື້ນຢູ່ທີ່ຫ້ອງປະຊຸມໃຫຍ່ຂອງ ພະແນກ ຊສ
ໂດຍການໃຫ້ກຽດເປັນປະທານກ່າວເປີດກອງປະຊຸມ ຂອງທ່ານ ຮສຈ ດຣ ຄຳເຫຼັກ ໄຊດາລາ
ຫົວໜ້າ ພຊສ ມີຄະນະທີມງານວິຊາການມາຈາກ ສປ ຈີນ 11 ທ່ານ ແລະ ຄະນະທີມງານວິຊາການ
ຂະແໜງຄູ້ມຄອງຊັບພະຍາກອນປ່າໄມ້ ພຊສ ເຂົ້າຮ່ວມລວມທັງໝົດ 29 ທ່ານ ຍີງ 1 ທ່ານ.

ໃນກອງປະຊຸມ
ທັງສອງຝ່າຍໄດ້ທົບທວນຄືນຜົນການຈັດຕັ້ງປະຕິບັດວຽກງານຕ່າງໆ
ໃນໄລຍະຜ່ານມາໃຫ້ກັນຮັບຮູ້ ໂດຍສະເພາະແມ່ນ
ການຮ່ວມມືການອານຸລັກສັດປ່າຕາມແນວຊາຍແດນລະຫວ່າງ 2 ຊາດ ສ ປ ປ ລາວ - ສປ ຈີນ
ເພື່ອຈະໄດ້ຮ່ວມມືກັນສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ
ແນ່ໃສ່ເຮັດໃຫ້ປ່າໄມ້ປົກຫຸ້ມສີຂຽວຕະຫລອດໄປ ທັງເປັນບ່ອນທີ່ຢູ່ອາໄສຂອງບັນ
ດາສາຍພັນສັດຕ່າງໆນັບມື້ນັບເພີ່ມຂື້ນ ແລະ
ຕ່າງຝ່າຍກໍໄດ້ນຳເອົາບົດຮຽນມາແລກປ່ຽນເຊິ່ງກັນ ແລະ ກັນ ເປັນຕົ້ນແມ່ນ
ການກວດກາລາດຕາເວັນຮ່ວມກັນ ນອກຈາກນັ້ນ ທັງສອງຝ່າຍ
ຕ່າງໜ້າຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ພຊສ ແຂວງຫລວງນໍ້າທາ ສ ປ ປ ລາວ ແລະ
ປ່າສະຫງວນຊັງຢອງ ສປ ຈີນ. ຍັງໄດ້ລາຍງານສະພາບຄວາມຫຍຸ້ງຍາກ ແລະ
ຂໍ້ສະດວກໃຫ້ກັນຊາບ.

ຕອນທ້າຍຂອງກອງປະຊຸມ ທ່ານ ຮຈສ ດຣ ຄຳເຫຼັກ ໄຊດາລາ ຫົວໜ້າ ພຊສ
ໄດ້ມີຄຳເຫັນໂອ້ລົມເນັ້ນໜັກເຖິງ ຄວາມສາມັກຄີການຮ່ວມມືຮັດແໜ້ນສາຍສຳພັນອັນພິເສດ
ລະຫວ່າງ ສ ປ ປ ລາວ - ສປ ຈິນ ທີ່ເຄີຍມີມາແຕ່ຍາວນານ ນັ້ນຮຽກຮ້ອງໃຫ້ທັງ 2
ທີມງານວິຊາການກ່ຽວຂ້ອງດັ່ງກ່າວ
ຈົ່ງເພີ່ມທະວີຄວາມເອົາໃຈໃສ່ປະສານງານກົມກຽວພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໜ້າມີ່ວິຊ
າສະເພາະ ດັ່ງກ່າວໃຫ້ມີຜົນສຳເລັດທັງສອດຄ່ອງກັບດ້ານລະບຽບກົດໝາຍລະຫວ່າງ 2 ຊາດ ລາວ -
 1 / 2

ຂ່າວ: ກອງປະຊຸມແລກປ່ຽນບົດຮຽນກ່ຽວກັບການອານຸລັກສັດປ່າຕາມແນວຊາຍແດນລາວ - ຈີນ
Written by ນ. ກໍ່າແກ້ວ ຫຼ້າດວງສີ
Tuesday, 04 November 2014 09:21 - Last Updated Tuesday, 04 November 2014 09:27
ຈີນອີກດ້ວຍ.

ກອງປະຊຸມດັ່ງກ່າວ ໄດ້ປິດລົງໃນຕອນເຊົ້າຂອງວັນດຽວກັນ
ດ້ວຍໝາກຜົນເປັນເອກະພາບ ແລະ ມີຄວາມສາມັກຄີຮ່ວມກັນໃນອານາຄົດ.

 2 / 2